ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 076 /ບລຈ

ນະຄອນຫຼວງວຽງຈັນ, ວັນທີ 2 ເມສາ 2026

ໜັງສືລາຍງານ

ຮຽນ: - ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

- ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ,

- ທ່ານ ຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ທີ່ນັບຖືຢ່າງສູງ.

ເລື່ອງ: ການຍົກເລີກມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ ປະຈຳປີ 2025 ຂອງ ບລຈ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ), ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ລະບຽບວ່າດ້ວຍນາຍທະບຽນຫຼັກຊັບ (ສະບັບປັບປຸງ), ສະບັບເລກທີ 005/23/ຕລຊລ, ລົງວັນທີ 02 ສິງຫາ 2023;
- ອີງຕາມ ໜັງສືແຈ້ງການກ່ຽວກັບການປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ ປະຈຳປີ 2025, ສະບັບເລກທີ 427/ຕລຊລ, ລົງວັນທີ 1 ເມສາ 2026.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຂໍຖືເປັນກຽດລາຍງານມາຍັງທ່ານ ກ່ຽວກັບການຍົກເລີກມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ ປະຈຳປີ 2025 ຂອງ ບລຈ, ເນື່ອງຈາກການອອກບົດລາຍງານການກວດສອບບັນຊີຂອງບໍລິສັດມີຄວາມລ່າຊ້າ ເປັນເຫດສຸດວິໄສເຮັດໃຫ້ ບລຈ ບໍ່ສາມາດຈັດກອງປະຊຸມສະພາບໍລິຫານ ເພື່ອຮັບຮອງແຜນການຈ່າຍເງິນປັນຜົນໄດ້ຕາມກຳນົດການໃນເບື້ອງຕົ້ນ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ຍົກເລີກມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນທີ່ໄດ້ຮັບເງິນປັນຜົນ ປະຈຳປີ 2025 ໃນວັນທີ 7 ເມສາ 2026** ຕາມໄດ້ເປີດເຜີຍໃນມະຕິກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ I ປະຈຳປີ 2026, ສະບັບເລກທີ 067/ບລຈ, ລົງວັນທີ 27 ມີນາ 2026.
2. ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ: ວັນທີ 7 ເມສາ 2026 **ແມ່ນຮັກສາໄວ້ຕາມເດີມ.**

ຕັ້ງການເປ ຂ6 ຂອງຕຶກເປ 1 ເຂດເສດຖະກິດພິເສດປົ່ງທາດຫຼວງ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 3373.
ໂທລະສັບ: (856-21) 419222, 419212, 419210 ແຟັກ: (856-21) 419221. ເວັບໄຊທ໌: https://www.lcs.com.la

3. ສຳລັບວັນປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຜູ້ຖືຮຸ້ນໄດ້ຮັບເງິນປັນຜົນໃໝ່ ລວມທັງອັດຕາ ການຈ່າຍເງິນປັນຜົນ ແລະ ວັນຊຳລະເງິນປັນຜົນ ຈາກຜົນການດຳເນີນງານ ປະຈຳປີ 2025 ບໍລິສັດ ຈະເປີດເຜີຍໃຫ້ມວນຊົນໄດ້ຮັບຊາບ ຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ ພາຍຫຼັງສະພາບໍລິຫານ ຂອງບໍລິສັດ ພິຈາລະນາຮັບຮອງແລ້ວ.

ດັ່ງນັ້ນ, ຈຶ່ງຂໍຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຜູ້ອຳນວຍການ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ລິນ ລີ

ຜູ້ປະສານງານ: ທ່ານ ນາງ ຈັນພະພອນ ສີຫາລາດ, ໂທ: 020 5599 5868.

ຕັ້ງຢູ່ຫ້ອງການເບີ A6 ຂອງຕຶກເບີ 1 ເຂດເສດຖະກິດພິເສດບຶງທາດຫຼວງ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 3373.
ໂທລະສັບ: (856-21) 419222, 419212, 419210 ແຟັກ: (856-21) 419221. ເວັບໄຊທ໌: https://www.lcs.com.la